ກອງປະຊຸມແຫ່ງຊາດ ຄັ້ງທີ 2 ກ່ຽວກັບ ໂຄງການລິເລີ່ມປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ
Written by
Tuesday, 11 September 2012 10:26 - Last Updated Tuesday, 11 September 2012 13:49
ຂຽນໂດຍ: ທ ສຸກສາຄອນ ສຸລິຍາ

ໃນວັນທີ 24 ສິງຫາ 2012, ກອງເລຂາ ຄະນະກໍາມະການ ແມ່ນໍ້າຂອງແຫ່ງຊາດລາວ
ໄດ້ຈັດກອງປະຊຸມ ລາຍງານກ່ຽວກັບຜົນໄດ້ຮັບ ຂອງໂຄງການສາທິດ ທີ່ເມືອງຈຳພອນ,
ແຂວງສະຫວັນນະເຂດ ໃນໄລຍະທໍາອິດ (2010-2011) ແລະ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງ, ແລະ
ຂະແໜງການ ຕ່າງໆ ໄດ້ທໍາຄວາມເຂົ້າໃຈເບື້ອງຕົ້ນ ກ່ຽວກັບ ໂຄງການດັ່ງກ່າວ ແລະ
ໄດ້ມີໂອກາດປຶກສາຫາລື ກ່ຽວກັບ ແຜນວຽກ ໄລຍະ ທີສອງ (2011-2015) ຂອງໂຄງການ ການລິເລີ່ມ
ປັບຕົວເຂົ້າກັບ ການປ່ຽນແປງດິນຟ້າ ອາກາດ.

ກອງປະຊຸມດັ່ງກ່າວ ໄດ້ຈັດຂື້ນ ທີ່ໂຮງແຮມລ່ອງງື່ມ, ທ່າລາດ, ແຂວງວຽງຈັນ ພາຍໃຕ້
ການເປັນປະທ່ານ ຂອງ ທ່ານ ນາງ ມອນມະນີ ຍອຍບົວກ່ອງ, ຫົວໜ້າກອງເລຂາ ຄະນະກໍາມະການ
ແມ່ນໍ້າຂອງແຫ່ງຊາດລາວ ກອງປະຊຸມໄດ້ດຳເນີນໄປເປັນເວລາ 1 ວັນເຕັມ
ໂດຍມີຜູ້ເຂົ້າຮ່ວມທັງໝົດ 38 ທ່ານ ຊຶ່ງມາຈາກ ບັນດາພາກສ່ວນທີ່ກ່ຽວຂ້ອງເຊັ່ນ:
ກອງເລຂາ ຄະນະກໍາມະການ ແມ່ນໍ້າຂອງ ແຫ່ງຊາດລາວ, ກອງເລຂາ ຄະນະກໍາມາທິການ
ແມ່ນໍ້າຂອງສາກົນ, ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ, ກົມອຸຕຸນິຍົມ ແລະ ອຸທົກກະ ສາດ,
ກົມຊັບພະຍາ ກອນນ້ຳ,ສະຖາບັນຄົ້ນຄ້ວາ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ, ກົມປູກຝັງ,
ແລະ ກົມຊັບພະຍາກອນ ປ່າໄມ້.

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ຂະແໜງການຕ່າງໆ
ໄດ້ທຳຄວາມເຂົ້າໃຈເບື້ອງ ຕົ້ນ ກ່ຽວກັບ ຜົນໄດ້ຮັບຂອງໂຄງການສາທິດ ທີ່ເມືອງຈຳພອນ,
ແຂວງສະຫວັນນະເຂດ ໃນໄລຍະທໍາອິດ (2010-2011) ໂດຍໂຄງການດັ່ງກ່າວນີ້ມີຈຸດປະ ສົງ
ເພື່ອເຮັດໃຫ້ປະຊາຊົນໃນເຂດ ເມືອງຈຳພອນ ສາມາດປັບຕົວ ແລະ ຮັບມືກັບໄພທຳມະຊາດ
ເປັນຕົ້ນແມ່ນ ການແກ້ໄຂບັນຫານ້ຳ ຖວມຜົນຜະລິດກະສິກຳ ແລະ
ການແກ້ໄຂບັນຫາຂາດແຄນນ້ຳໃນລະດູແລ້ງ ກອງປະຊຸມດັ່ງກ່າວ
ແມ່ນເຕັມໄປດ້ວຍບັນຍາກາດທີ່ຟົດຟື້ນ ບັນດາຜູ້ເຂົ້າຮ່ວມໄດ້ປະກອບຄໍາຄິດຄໍາເຫັນ ແລະ
ແລກປ່ຽນປະສົບການເຂົ້າໃນກອງປະຊຸມຢ່າງເປັນກັນເອງ.

 1 / 2

ກອງປະຊຸມແຫ່ງຊາດ ຄັ້ງທີ 2 ກ່ຽວກັບ ໂຄງການລິເລີ່ມປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ
Written by
Tuesday, 11 September 2012 10:26 - Last Updated Tuesday, 11 September 2012 13:49
ກອງປະຊຸມໃນຄັ້ງນີ້ ແມ່ນໄດ້ຮັບຜົນສຳເລັດເປັນຢ່າງດີ ໂດຍເຫັນໄດ້
ຈາກການສະເໜີຄຳຄິດເຫັນທີ່ເປັນປະໂຫຍດຈາກຫຼາຍທ່ານ ເຂົ້າໃນການປັບປຸງ ໂຄງການ
ການລິເລີ່ມ ປັບຕົວເຂົ້າກັບ ການປ່ຽນແປງດິນຟ້າ ອາກາດ ໄລຍະທີສອງ(2011-2015)
ໃຫ້ມີປະສິດທິຜົນ ເພີ່ມຂື້ນ ກ່າວໄປສູ່ການປະຕິບັດ ໂຄງການ ລິເລີ່ມ ປັບຕົວເຂົ້າກັບ
ການປ່ຽນແປງດິນຟ້າ ອາກາດແບບຍືນຍົງ ໃນພາກກາງ, ພາກເໜືອ ແລະ ພາກໄຕ້ ກໍ່ຄືທົ່ວປະເທດ.

 2 / 2